ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 0336 /ອຄ.ກຂອ

ນະຄອນຫຼວງວຽງຈັນ, ວັນທີ 13 ມີນາ 2017

# ຄຳສັ່ງແນະນຳ

ເຖິງ: ຄະນະຮັບຜິດຊອບການປະມູນຂາຍໄມ້ທີ່ຍຶດເປັນຂອງລັດ ນະຄອນຫຼວງວຽງຈັນ ແລະ ບັນດາແຂວງທົ່ວປະເທດ.

ເລື່ອງ: ແນະນຳການຈັດຕັ້ງປະມູນຂາຍໄມ້ທີ່ຍຶດເປັນຂອງລັດ.

- ອີງຕາມ ແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ເລກທີ 1345/ຫສນຍ.ກລຂ, ລົງວັນທີ 09 ກັນຍາ 2016 ແລະ ແຈ້ງການ ເລກທີ 324/ຫສນຍ.ກລຂ (ຂໍ້ 3), ລົງວັນທີ 21 ກຸມພາ 2017;
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບການປະມູນຂາຍໄມ້ທີ່ຍຶດເປັນຂອງລັດໃນຂອບເຂດທົ່ວປະເທດ ເລກທີ 19/ນຍ ລົງວັນທີ 02 ມີນາ 2017;
- ອີງຕາມ ລະບຽບການຊື້-ຂາຍໄມ້ ເລກທີ 1726/ອຄ.ກຂອ, ລົງວັນທີ 23 ສິງຫາ 2012.

ເພື່ອໃຫ້ການຈັດຕັ້ງປະມູນຂາຍໄມ້ທີ່ຍຶດເປັນຂອງລັດໃນຂອບເຂດທົ່ວປະເທດສຳເລັດໄດ້ຕາມເປົ້າໝາຍ, ແນ່ໃສ່ສະໜອງວັດຖຸດິບໄມ້ໃຫ້ແກ່ບັນດາໂຮງງານປຸງແຕ່ງໄມ້ ແລະ ໂຮງງານເຟີນີເຈີພາຍໃນປະເທດ ເພື່ອປຸງແຕ່ງເປັນຜະລິດຕະພັນໄມ້ທີ່ມີການສ້າງມູນຄ່າເພີ່ມສູງ. ພ້ອມທັງຮັບປະກັນຄວາມໂປ່ງໃສ, ເປັນທຳ, ຖືກຕ້ອງຕາມລະບຽບການ ແລະ ເປັນເອກະພາບກັນໃນການຈັດຕັ້ງປະຕິບັດ, ຮັບປະກັນຜົນປະໂຫຍດຮ່ວມກັນລະຫວ່າງພາກລັດ ແລະ ພາກທຸລະກິດ.

ລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ ແນະນຳ ຄະນະຮັບຜິດຊອບການປະມູນຂາຍໄມ້ທີ່ຍຶດເປັນຂອງລັດ ນະຄອນຫຼວງວຽງຈັນ ແລະ ບັນດາແຂວງທົ່ວປະເທດ ເພື່ອປະຕິບັດດັ່ງນີ້ :

1. ໃຫ້ ຄະນະຮັບຜິດຊອບການປະມູນຂາຍໄມ້ທີ່ຍຶດເປັນຂອງລັດ ນະຄອນຫຼວງວຽງຈັນ ແລະ ບັນດາແຂວງ ສົມທົບສົມທົບກັບ ຄະນະຮັບຜິດຊອບການປະມູນໄມ້ທີ່ຍຶດເປັນຂອງລັດໃນຂອບເຂດທົ່ວປະເທດຂັ້ນສູນກາງ ເລັ່ງລັດການປະມູນຂາຍໄມ້ທີ່ຍຶດເປັນຂອງລັດໃຫ້ສຳເລັດ ດ້ວຍຮູບການປະມູນແບບເປີດກວ້າງທົ່ວປະເທດ.
2. ໃຫ້ໂຄສະນາເຜີຍແຜ່ເປີດກວ້າງການປະມູນໄມ້ທີ່ຍຶດເປັນຂອງລັດ ໂດຍຜ່ານສື່ຕ່າງໆເຊັ່ນ: ໂທລະພາບ, ວິທະຍຸ, ສື່ອອນລາຍ ຫຼື ໜັງສືພິມຕ່າງໆ ຢ່າງໜ້ອຍ 15 ວັນລັດຖະການ ກ່ອນວັນທີ່ຈະເປີດການປະມູນ. ເພື່ອໃຫ້ບັນດາໂຮງງານປຸງແຕ່ງໄມ້ ແລະ ໂຮງງານເຟີນີເຈີໃນຂອບເຂດທົ່ວປະເທດທີ່ມີຄວາມສົນໃຈ, ມີເວລາພຽງພໍໃນການກະກຽມຄວາມພ້ອມ ແລະ ເຂົ້າຮ່ວມປະມູນ, ໂດຍສະເພາະບັນດາໂຮງງານທີ່ເປັນສະມາຊິກຂອງສະມາຄົມອຸດສາຫະກຳປຸງແຕ່ງໄມ້ສຳເລັດຮູບແຫ່ງຊາດລາວ ແລະ ສະມາຄົມເຟີນີເຈີລາວ.
3. ຜູ້ທີ່ສາມາດເຂົ້າຮ່ວມປະມູນຊື້ໄມ້ທີ່ຍຶດເປັນຂອງລັດໄດ້ ຕ້ອງມີເງື່ອນໄຂດັ່ງນີ້:
   - 3.1 ຕ້ອງເປັນໂຮງງານປຸງແຕ່ງໄມ້ ຫຼື ໂຮງງານເຟີນີເຈີ ຢູ່ ສປປ ລາວ ທີ່ມີທະບຽນວິສາຫະກິດດຳເນີນທຸລະກິດດ້ານການຜະລິດ ແລະ ປຸງແຕ່ງໄມ້ຖືກຕ້ອງຕາມລະບຽບກົດໝາຍ, ໂດຍໃຫ້ຖືເອົາສະມາຊິກຂອງສະມາຄົມອຸດສາຫະກຳປຸງແຕ່ງໄມ້ສຳເລັດຮູບແຫ່ງຊາດ ແລະ ສະມາຄົມເຟີນີເຈີລາວ ເປັນບູລິມະສິດ;
   - 3.2 ມີໃບຢັ້ງຢືນຖານະທາງດ້ານການເງິນຈາກທະນາຄານ ຢູ່ ສປປ ລາວ;

3.3 ມີປະຫວັດການດຳເນີນທຸລະກິດຈະແຈ້ງ, ບໍ່ມີໜີ້ສິນ, ຄ້າງປະຕິບັດພັນທະຕ່າງໆກັບລັດມາກ່ອນ, ບໍ່ເຄີຍຖືກດຳເນີນຄະດີ, ກ່າວໂທດ ຫຼື ຖືກປັບໃໝຍ້ອນການລະເມີດກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ, ໂດຍສະເພາະແມ່ນການກະທຳຜິດທີ່ກ່ຽວພັນກັບໄມ້.

4. ລາຄາທີ່ໃຊ້ເປັນພື້ນຖານສຳລັບການປະມູນ ລວມມີ: ① ລາຄາພັນທະໄມ້, ② ອາກອນມູນຄ່າເພີ່ມ ແລະ ③ ອາກອນກຳໄລ.

5. ຂັ້ນຕອນການປະມູນຂາຍໄມ້ຍຶດ ໃຫ້ດຳເນີນໄປ 03 ຂັ້ນຕອນດັ່ງນີ້:

5.1 <u>ຂັ້ນຕອນທີ 01</u>:

5.1.1 ກໍລະນີໄມ້ຍຶດທີ່ເປັນປະເພດໄມ້ທ່ອນ: ແມ່ນໃຫ້ຖືເອົາລາຄາຕາມແຈ້ງການລາຄາພັນທະໄມ້ ທີ່ກະຊວງອຸດສາຫະກຳ ແລະ ການຄ້າ ວາງອອກ (ແຈ້ງການ ເລກທີ 1813/ອຄ.ກຂອ, ລົງວັນທີ 04 ກັນຍາ 2015) ບວກອາກອນມູນຄ່າເພີ່ມ (ອມພ) 10% ຈາກການຂາຍໄມ້ ແລະ ອາກອນກຳໄລ (ອັດຕາກຳໄລລວມ 20% ຂອງ ອັດຕາອາກອນກຳໄລ 24%) ເຂົ້າໃສ່ນຳ.

ຕົວຢ່າງ: ລາຄາພັນທະໄມ້ຍາງທ່ອນ (ເກຣດ ກ)

- ອາກອນມູນຄ່າເພີ່ມຈາກການຂາຍໄມ້: 927.000 ກີບ x 10% = 92.700 ກີບ
- ອາກອນກຳໄລ: 927.000 ກີບ x 20% x 24% = 44.496 ກີບ
- ລາຄາພື້ນຖານສຳລັບການປະມູນ: 927.000 + 92.7000 + 44.496 = **<u>1.064.196 ກີບ.</u>**

5.1.2 ກໍລະນີໄມ້ຍຶດທີ່ເປັນປະເພດໄມ້ຕີຕັບ: ໃຫ້ຄິດໄລ່ລາຄາໄມ້ຕີຕັບ ໂດຍ ເອົາລາຄາໄມ້ທ່ອນ ເກຣດ ກ ບວກເພີ່ມຂຶ້ນ 10% (ຍ້ອນໄມ້ໄດ້ຜ່ານການສ້າງມູນຄ່າເພີ່ມດ້ວຍການປຸງແຕ່ງເປັນໄມ້ຕີຕັບແລ້ວ). ຫຼັງຈາກນັ້ນ , ໃຫ້ບວກອາກອນມູນຄ່າເພີ່ມ (ອມພ) 10% ຈາກການຂາຍໄມ້ ແລະ ອາກອນກຳໄລ (ອັດຕາກຳໄລ ລວມ 20% ຂອງ ອັດຕາອາກອນກຳໄລ 24%) ເຂົ້າໃສ່ນຳ.

ຕົວຢ່າງ: ລາຄາພັນທະໄມ້ຍາງຕີຕັບ

- ລາຄາໄມ້ຕີຕັບ: 927.000 ກີບ + 10% = 1.019.700 ກີບ
- ອາກອນມູນຄ່າເພີ່ມຈາກການຂາຍໄມ້: 1.019.700 ກີບ x 10% = 101.970 ກີບ
- ອາກອນກຳໄລ: 1.019.700 ກີບ x 20% x 24% = 48.946 ກີບ
- ລາຄາພື້ນຖານສຳລັບການປະມູນ: 1.019.700 + 101.970 + 48.946 = **<u>1.170.616 ກີບ.</u>**

5.1.3 ກໍລະນີໄມ້ຍຶດທີ່ເປັນປະເພດໄມ້ແປຮູບ: ໃຫ້ຄິດໄລ່ລາຄາໄມ້ແປຮູບເອົາລາຄາໄມ້ທ່ອນ ເກຣດ ກ ບວກ
ເພີ່ມຂຶ້ນ 15% (ຍ້ອນໄມ້ໄດ້ຜ່ານການສ້າງມູນຄ່າເພີ່ມດ້ວຍການປຸງແຕ່ງເປັນໄມ້ແປຮູບແລ້ວ). ຫຼັງຈາກນັ້ນ, ໃຫ້ບວກອາກອນມູນຄ່າເພີ່ມ (ອມພ) 10% ຈາກການຂາຍໄມ້ ແລະ ອາກອນກຳໄລ (ອັດຕາກຳໄລ ລວມ 20% ຂອງ ອັດຕາອາກອນກາໄລ 24%) ເຂົ້າໃສ່ນຳ.

ຕົວຢ່າງ: ລາຄາພັນທະໄມ້ຍາງແປຮູບ

- ລາຄາໄມ້ແປຮູບ: 927.000 ກີບ + 15% = 1.066.050 ກີບ
- ອາກອນມູນຄ່າເພີ່ມຈາກການຂາຍໄມ້: 1.066.050 ກີບ x 10% = 106.605 ກີບ
- ອາກອນກຳໄລ: 1.019.700 ກີບ x 20% x 24% = 51.170 ກີບ
- ລາຄາພື້ນຖານສຳລັບການປະມູນ: 1.066.050 + 106.605 + 51.170 = **<u>1.223.825 ກີບ.</u>**

(ຫາກພາຍຫຼັງປະຕິບັດຕາມຂັ້ນຕອນທີ 01 ແລ້ວ ບໍ່ສາມາດຂາຍໄດ້ ແມ່ນໃຫ້ຄະນະຮັບຜິດຊອບການປະມູນຂາຍໄມ້ທີ່ຍຶດເປັນຂອງລັດ ນະຄອນຫຼວງວຽງຈັນ, ບັນດາແຂວງ ເຮັດບົດບັນທຶກໄວ້ເປັນຫຼັກຖານ ແລະ ສືບຕໍ່ດຳເນີນການຂາຍໂດຍນຳໃຊ້ຂັ້ນຕອນທີ 02)

5.2 <u>ຂັ້ນຕອນທີ 02</u>: ໃຫ້ຄິດໄລ່ໂດຍເອົາຄຸນນະພາບໄມ້ຕົວຈິງທີ່ຍັງເຫຼືອ (ຕາມການປະເມີນຂອງຄະນະຮັບຜິດຊອບການປະມູນຂາຍໄມ້ຍຶດຂັ້ນທ້ອງຖິ່ນ) ຄູນດ້ວຍລາຄາພັນທະໄມ້ຕາມແຕ່ລະກໍລະນີຂອງປະເພດໄມ້ຍຶດທີ່ໄດ້ກ່າວມາໃນຂໍ້ 5.1 ຂ້າງເທິງ ເພື່ອເປັນລາຄາພື້ນຖານສໍາລັບການປະມູນ.

ຕົວຢ່າງ:

5.2.1 ກໍລະນີໄມ້ທ່ອນ: ໄມ້ຍາງທ່ອນ ເກຣດ ກ ຜ່ານການກວດກາຄຸນນະພາບຄືນເຫັນວ່າໄມ້ມີຄຸນນະພາບພຽງແຕ່ 70%.

ລາຄາພື້ນຖານສໍາລັບການປະມູນ: 1.064.196 ກີບ x 70% = <u>744.937 ກີບ</u>.

5.2.2 ກໍລະນີໄມ້ຕີຕັບ: ຜ່ານການກວດກາຄຸນນະພາບຄືນເຫັນວ່າໄມ້ມີຄຸນນະພາບພຽງແຕ່ 70%.

ລາຄາພື້ນຖານສໍາລັບການປະມູນ: 1.170.616 ກີບ x 70% = <u>819.431 ກີບ</u>.

5.2.3 ກໍລະນີໄມ້ແປຮູບ: ຜ່ານການກວດກາຄຸນນະພາບຄືນເຫັນວ່າໄມ້ມີຄຸນນະພາບພຽງແຕ່ 70%.

ລາຄາພື້ນຖານສໍາລັບການປະມູນ: 1.223.825 ກີບ x 70% = <u>856.677 ກີບ</u>.

(ຫາກພາຍຫຼັງປະຕິບັດຕາມຂັ້ນຕອນທີ 02 ແລ້ວ ຍັງບໍ່ສາມາດຂາຍໄດ້ ແມ່ນໃຫ້ຄະນະຮັບຜິດຊອບການປະມູນຂາຍໄມ້ທີ່ຍຶດເປັນຂອງລັດ ນະຄອນຫຼວງວຽງຈັນ, ບັນດາແຂວງ ເຮັດບົດບັນທຶກໄວ້ເປັນຫຼັກຖານ ແລະ ສືບຕໍ່ດໍາເນີນການຂາຍໂດຍນໍາໃຊ້ຂັ້ນຕອນທີ 03)

5.3 <u>ຂັ້ນຕອນທີ 03:</u> ພິຈາລະນາຂາຍໃນລາຄາສູງສຸດໃຫ້ແກ່ຜູ້ທີ່ເຂົ້າຮ່ວມປະມູນສະເໜີໃນເວລານັ້ນຢ່າງສົມເຫດສົມຜົນ.

6. ສໍາລັບໄມ້ຍຶດທີ່ເປັນປະເພດໄມ້ທ່ອນສັ້ນ (ໄມ້ກະດູດ) ທີ່ບໍ່ສາມາດວັດແທກບໍລິມາດເປັນແມັດກ້ອນ ແລະ ຈັດຊັ້ນຄຸນນະພາບໄດ້, ຊຶ່ງຄະນະຮັບຜິດຊອບການປະມູນຂາຍໄມ້ຍຶດທີ່ເປັນຂອງລັດຂັ້ນທ້ອງຖິ່ນໄດ້ສັງລວມຂໍ້ມູນນໍ້າໜັກເປັນໂຕນ. ໄມ້ຍຶດຈໍານວນນີ້ໃຫ້ ຄະນະຮັບຜິດຊອບການປະມູນຂາຍໄມ້ທີ່ຍຶດເປັນຂອງລັດປ່ຽນນໍ້າໜັກຂອງໄມ້ດັ່ງກ່າວຈາກໂຕນມາເປັນແມັດກ້ອນ ຕາມຫຼັກການປ່ຽນນໍ້າໜັກທີ່ໄດ້ລະບຸໄວ້ໃນຂໍ້ຕົກລົງວ່າດ້ວຍລະບຽບການວັດແທກໄມ້ທ່ອນ, ຕໍໄມ້, ປຸດໄມ້ ແລະ ການຈັດຊັ້ນຄຸນນະພາບໄມ້ທ່ອນ ເລກທີ 0116/ກປ.07 ລົງວັນທີ 17 ພຶດສະພາ 2007 ດັ່ງນີ້:

6.1 ໄມ້ຂະຍຸງ, ຄໍາພີ 01 ແມັດກ້ອນ ທຽບເທົ່າ 1,5 ໂຕນ;

6.2 ໄມ້ດູ່, ໄມ້ແຕ້ຄ່າ 01 ແມັດກ້ອນ ທຽບເທົ່າ 1,2 ໂຕນ; ແລະ

6.3 ໄມ້ຊະນິດອື່ນໆ 01 ແມັດກ້ອນ ທຽບເທົ່າ 1 ໂຕນ

ຫຼັງຈາກນັ້ນ, ຈຶ່ງດໍາເນີນການປະມູນຂາຍໄມ້ຕາມຂັ້ນຕອນທີ່ໄດ້ລະບຸໄວ້ໃນຂໍ້ 5 ຂອງຄໍາສັ່ງແນະນໍາສະບັບນີ້.

7. ການເກັບອາກອນ:

7.1 ອາກອນມູນຄ່າເພີ່ມ (10%) ແລະ ອາກອນກໍາໄລ (ອັດຕາກໍາໄລລວມ 20% ຂອງ ອັດຕາອາກອນກໍາໄລ 24%) ແມ່ນໄດ້ຄິດໄລ່ເຂົ້າໃສ່ໃນໂຄງສ້າງຂອງລາຄາເພື່ອເປັນພື້ນຖານໃນການປະມູນແລ້ວ.

7.2 ອາກອນຂົນສົ່ງ (10%): ແມ່ນໃຫ້ເກັບນໍາບໍລິສັດທີ່ບໍລິການຂົນສົ່ງໄມ້, ລວມທັງຜູ້ຊະນະການປະມູນໄມ້ທີ່ນໍາໃຊ້ພາຫະນະທີ່ຂຶ້ນທະບຽນໃນນາມບໍລິສັດຂົນສົ່ງຂອງຜູ້ກ່ຽວ ເພື່ອເຄື່ອນຍ້າຍໄມ້ທີ່ໄດ້ຈາກການປະມູນ. ຍົກເວັ້ນກໍລະນີຜູ້ຊະນະການປະມູນນໍາໃຊ້ພາຫະນະທີ່ຂຶ້ນທະບຽນໃນນາມໂຮງງານທີ່ດໍາເນີນກິດຈະການປຸງແຕ່ງໄມ້ ເພື່ອຂົນສົ່ງ ແລະ ເຄື່ອນຍ້າຍໄມ້ເຂົ້າໂຮງງານ ແມ່ນບໍ່ໃຫ້ເກັບອາກອນນີ້.

8. ໄມ້ທີ່ຍຶດເປັນຂອງລັດ ຕ້ອງໄດ້ຂຶ້ນບັນຊີເປັນຊັບສິນຂອງລັດກັບຂະແໜງການເງິນນະຄອນຫຼວງວຽງຈັນ ແລະ ບັນດາແຂວງ (ຫ້ອງການຄຸ້ມຄອງຊັບສິນຂອງລັດ) ໂດຍໃຫ້ມີການເຊັນຢັ້ງຢືນຮັບຮູ້ບັນຊີຮ່ວມກັນລະຫວ່າງຂະແໜງກະສິກໍາ ແລະ ປ່າໄມ້, ຂະແໜງການເງິນ ແລະ ຂະແໜງອຸດສາຫະກໍາ ແລະ ການຄ້າ ເພື່ອຮັບປະກັນຄວາມເປັນເອກະພາບຕໍ່ບັນຊີ ແລະ ບໍລິມາດໄມ້ທີ່ຍຶດເປັນຂອງລັດ ທີ່ຈະປະມູນຂາຍ.

9. ຄ່າສິ້ນເປືອງຕ່າງໆທີ່ເກີດຂຶ້ນຈາກການຍຶດ, ການທ້ອນໂຮມ, ການເກັບຮັກສາໄມ້, ການຈັດປະມູນຂາຍໄມ້ ແລະ ຄ່າສິ້ນເປືອງອື່ນໆ ແມ່ນອະນຸຍາດໃຫ້ຫັກຈາກເງິນທີ່ໄດ້ຮັບຈາກການຂາຍໄມ້, ໂດຍໃຫ້ປະຕິບັດຕາມຄຳສັ່ງນາຍົກລັດຖະມົນຕີ ວ່າດ້ວຍການຄຸ້ມຄອງການເກັບລາຍຮັບຈາກການຂາຍໄມ້ ແລະ ເຄື່ອງປ່າຂອງດົງ ເຂົ້າງົບປະມານແຫ່ງລັດ ເລກທີ 57/ນຍ (ຂໍ້ 1.3 ງ: ເງິນລາຍຮັບຈາກການຂາຍໄມ້ຍຶດ, ໃຫ້ຫັກຄ່າສິ້ນເປືອງ 10%, ຈຳນວນທີ່ເຫຼືອໃຫ້ມອບເຂົ້າເປັນລາຍຮັບງົບປະມານສູນກາງ 50% ແລະ ງົບປະມານແຂວງ, ນະຄອນຫຼວງວຽງຈັນ 50%. ສຳລັບເງິນປັບໃໝໃຫ້ມອບເຂົ້າເປັນລາຍຮັບງົບປະມານແຂວງ, ນະຄອນຫຼວງວຽງຈັນ ທັງໝົດ).
10. ກໍລະນີພົບຄວາມຫຍຸ້ງຍາກໃນການຈັດຕັ້ງປະຕິບັດແມ່ນໃຫ້ລາຍງານຂໍທິດ ທ່ານເຈົ້າແຂວງ, ທ່ານລັດຖະມົນຕີ ກະຊວງ ອຸດສາຫະກຳ ແລະ ການຄ້າ ເພື່ອແກ້ໄຂໃຫ້ທ່ວງທັນກັບສະພາບການ.
11. ໃຫ້ ຄະນະຮັບຜິດຊອບປະມູນຂາຍໄມ້ທີ່ຍຶດເປັນຂອງລັດ ນະຄອນຫຼວງວຽງຈັນ ແລະ ບັນດາແຂວງ ເກັບກຳຂໍ້ມູນການຂຶ້ນບັນຊີໄມ້ຍຶດທີ່ມີຕົວຈິງ, ຜົນການປະມູນ, ການຊຳລະເງິນຊື້ໄມ້ຍຶດ ແລະ ອື່ນໆ ແລ້ວສັງລວມລາຍງານຄວາມຄືບໜ້າໃຫ້ຄະນະຮັບຜິດຊອບການປະມູນຂາຍໄມ້ຂັ້ນສູນກາງ ຊາບທຸກວັນທີ 15 ຂອງແຕ່ລະເດືອນ.
12. ຄຳສັ່ງແນະນຳສະບັບນີ້ມີຜົນສັກສິດນັບຕັ້ງແຕ່ລົງລາຍເຊັນເປັນເປັນຕົ້ນໄປ ແລະ ນຳໃຊ້ປ່ຽນແທນສະບັບເລກທີ 2071/ອຄ.ກຂອ, ລົງວັນທີ 14 ພະຈິກ 2016.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງ ທ່ານ ເພື່ອຊາບ ແລະ ປະຕິບັດຕາມນີ້ດ້ວຍ.

ລັດຖະມົນຕີ,

ສົມສະຫວາດ... (ປະທັບຕາ: ລັດຖະມົນຕີ)

ບ. ເຂັມມະນີ ພົນເສນາ

<u>ບ່ອນສົ່ງ</u>:

- ທ່ານ ນາຍົກ-ຮອງນາຍົກ
- ທ່ານ ລັດຖະມົນຕີ, ຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ
- ທ່ານ ລັດຖະມົນຕີ ກະຊວງ ກະສິກຳ ແລະ ປ່າໄມ້
- ທ່ານ ເຈົ້າຄອງນະຄອນຫລວງວຽງຈັນ ແລະ ບັນດາທ່ານເຈົ້າແຂວງ
- ທ່ານ ຫົວໜ້າຄະນະສະເພາະກິດ40/ນຍ
- ທ່ານ ປະທານສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ
- ທ່ານ ປະທານສະມາຄົມອຸດສາຫະກຳປຸງແຕ່ງໄມ້ສຳເລັດຮູບແຫ່ງຊາດລາວ
- ທ່ານ ປະທານສະມາຄົມເຟີນີເຈີລາວ